

# ວິໄສທັດແຫ່ງອະນາຄົດຂອງ AEON ກຣຸບ

# ວິໄສທັດແຫ່ງອະນາຄົດຂອງ AEON ກຣຸບ


ຄຳເວົ້າແຫ່ງວິໄສທັດ 02

ເລື່ອງເລົ່າຂອງ *MIRAI* ແລະ *AEON* 04

ການວາງຕຳແໜ່ງ ແລະ ການສ້າງວິໄສທັດຂອງ AEON 12

ອະນາຄົດທີ່ AEON ກຣຸບຢາກສ້າງໃຫ້ເປັນຈິງ 14

ພາບລັກທີ່ AEON ກຣຸບປາຖະໜາ 16

ພາບລັກ ແລະ ຄຳໝັ້ນສັນຍາທີ່ຈະເອົາໃຈໃສ່ 20

# ສ້າງສັນ ຊີວິດໃນອະນາຄົດທີ່ ທຸກໆຄົນມີ ຮອຍຍິ້ມອັນເບີກບານ





## ແນວຄວາມຄິດໃນຄຳເວົ້າແຫ່ງວິໄສທັດ

ສິ່ງທີ່ບໍ່ປ່ຽນແປງຄື ການເອົາ “ລູກຄ້າ” ເປັນຈຸດເລີ່ມຕົ້ນ ເອົາ “ວິຖີຊີວິດ” ເປັນຂົງເຂດທຸລະກິດ ເພື່ອສ້າງສັນຄວາມຄວາມຮັ່ງມີສີສຸກ ແລະ ຄວາມສຸກ ໃຫ້ລູກຄ້າ ຜູ້ເປັນຄົນທີ່ດຳລົງຊີວິດ

ສິ່ງທີ່ປ່ຽນແປງຄື ດຶງດູດເອົາໃຈຂອງ “ຜູ້ຄົນ” ທີ່ຫຼາກຫຼາຍແບບບໍ່ເຄີຍມີມາກ່ອນ ບໍ່ພຽງແຕ່ຮັບມືກັບອະນາຄົດທີ່ຈະປ່ຽນແປງ ແຕ່ຈະເປັນການ “ສ້າງສັນ” ວິຖີຊີວິດຂອງພວກເຮົາແຫ່ງອະນາຄົດ

ພວກເຮົາເອົາ “ຮອຍຍິ້ມ” ທີ່ເກີດຈາກລູກຄ້າ ແລະ ພວກເຮົາ ມາປຽບເປັນ ດອກໄມ້ທີ່ຫຼາກຫຼາຍສີສັນ ແລະ ໃຫ້ຊື່ວ່າ “ຮອຍຍິ້ມອັນເບັ່ງບານ”

ນີ້ຄືເລື່ອງເລົ່າຂອງ

ພວກເຮົາ *AEON* ແລະ *MIRAI* *





(ພວກເຮົາກຳລັງມຸ່ງໜ້າໄປສູ່ທິດທາງໃດນໍ້?)

ຄຳຖາມດັ່ງກ່າວ ປະກົດຂຶ້ນມາໃນໃຈຂອງ *AEON* ພວດດຽວ ພໍແຕ່ສວດຮູ້ *MIRAI* ກໍມາຢູ່ທາງຂ້າງເປັນທີ່ຮຽບຮ້ອຍແລ້ວ

ອະນາຄົດຂ້າງໜ້ານີ້

ວິຖີຊີວິດ ແລະ ສັງຄົມ

ຈະເປັນແນວໃດນໍ້



* *MIRAI* ໝາຍເຖິງ "ອະນາຄົດ" ໃນພາສາຍີ່ປຸ່ນ



ອະນາຄົດທີ່ແນ່ນອນນັ້ນ,
ມັນບໍ່ມີດອກ

*MIRAI* ຍິ້ມແລະຕອບກັບມາ

ໃນໂລກຂອງເຮົາຕອນນີ້ ຈະຄາດເດົາອະນາຄົດນັ້ນ
ກໍອາດຈະເຮັດໄດ້ຢູ່

ຍົກຕົວຢ່າງ
ເຕັກໂນໂລຢີເຮັດໃຫ້ມະນຸດເຮົາມີອິດສະຫຼະຫຼາຍຂຶ້ນ
ແຕ່ ກໍອາດມີຄົນທີ່ລຳບາກຍ້ອນມັນ



ບັນຫາຂອງສິ່ງແວດລ້ອມ ອາດຈະຮ້າຍແຮງຂຶ້ນໄປຕື່ມ
ແຕ່ຍ້ອນແນວນັ້ນອາດເຮັດໃຫ້ໂລກຂອງເຮົາ
ກາຍເປັນພຽງສິ່ງດຽວ

ແຕ່ວ່າ, ອະນາຄົດ ຈະຜັນແປໄປທິດທາງໃດນັ້ນ
ບໍ່ແມ່ນວ່າ ພວກເຮົາຈະບໍ່ຮູ້ເລີຍ

"ຢາກໃຫ້ວິວິຖີຊີວິດ ແລະ ສັງຄົມແບບນີ້ ກາຍເປັນຈິງ"
ຄວາມຄິດແບບນີ້
ກໍຈະກາຍເປັນສ່ວນໜຶ່ງຂອງອະນາຄົດ



*MIRAI* ຊີ້ມືອອກໄປໄກໆ ແລ້ວເວົ້າວ່າ

ເອົາລະ, ເງີຍໜ້າຂຶ້ນ, ເບິ່ງເດີ້
ສິ່ງທີ່ຄາດເດົາໄດ້ບໍ່ແມ່ນສິ່ງທີ່ຢູ່ໃກ້ໆນີ້ເທົ່ານັ້ນ, ພຸ້ນຢູ່ໄກໆພຸ້ນ
ທິວທັດທີ່ເຫັນເປັນແນວໃດ?

ບໍ່ເຫັນຫຍັງເລີຍ ເຫັນແຕ່ໂລກທີ່ວ່າງເປົ່າ





ຄັ້ນຊັ້ນລອງຈິດຕະນາການເບິ່ງ ທິວທັດທີ່ພວກເຈົ້າຢາກເຫັນ
ລອງວາດພາບໃນໃຈເບິ່ງ

*AEON* ໄດ້ແນມເບິ່ງທາງດ້ານໜ້າທີ່ແສນໄກອີກຄັ້ງໜຶ່ງ
ເໝືອນກັບແນມເບິ່ງຜືນຜ້າສີຂາວ

...ອື໊ະ!





ຮອຍຍິ້ມ! ເຫັນຮອຍຍິ້ມ!

ທຸກຄົນມີຮອຍຍິ້ມທີ່ງົດງາມແບບທີ່ບໍ່ເຄີຍເຫັນມາກ່ອນ

ເໝືອນກັບວ່າທົ່ງດອກໄມ້ທີ່ກວ້າງຂວາງສຸດຊົ່ວສາຍຕາ

ເດ້! ທັງລູກຄ້າ ແລະ ພວກເຮົາພາກັນຍິ້ມຢູ່!





ເຖິງຈະຄາດເດົາບໍ່ໄດ້ ແຕ່ກໍສາມາດຈິນຕະນາການໄດ້
ສິ່ງທີ່ຈິນຕະນາການໄດ້ກໍສ້າງສັນໄດ້

ອືມ, ເຫັນແລ້ວ
ທັດສະນີຍະພາບທີ່ພວກເຮົາຢາກໃຫ້ເປັນຈິງ

*AEON* ຕອບດ້ວຍສາຍຕາອັນເປັນປະກາຍ

ສ້າງສັນ
ຊີວິດໃນອະນາຄົດທີ່
ທຸກໆຄົນມີ
ຮອຍຍິ້ມອັນເບີກບານ

ຢູ່ໃນຫົວໃຈ
ຖ້າຍັງມີຮອຍຍິ້ມທີ່ຫຼາກຫຼາຍສີສັນ
ເຮົາຕ້ອງເຮັດໃຫ້ໄດ້

## ວິໄສທັດ ແມ່ນ ປ້າຍບອກທາງຂອງອະນາຄົດ

ເລື່ອງເລົ່າ ເປັນເສັ້ນທາງເລີ່ມຕົ້ນໄປສູ່ອະນາຄົດທີ່ພວກເຮົາມຸ່ງຫວັງ
ເຈົ້າໄດ້ຂຽນທັດສະນີຍະພາບແບບໃດ?
"ວິໄສທັດແຫ່ງອະນາຄົດຂອງ AEON ກຣຸບ" ທີ່ຈະແນະນຳຕໍ່ໄປນີ້ ແມ່ນອີງຕາມ "ປັດຊະຍາພື້ນຖານຂອງ ອີອອນ" ແລະ ໄດ້ນຳເອົາຄວາມຄິດ ແລະ ຄວາມເຂັ້ມແຂງຂອງກຸ່ມບໍລິສັດຕ່າງໆ ແລະ ບຸກຄົນຂອງ AEON ເພື່ອມາເປັນປ້າຍບອກທາງໄປສູ່ອະນາຄົດ

ວິໄສທັດນີ້ປະກອບໂດຍ
"ອະນາຄົດທີ່ AEON ກຣຸບຢາກສ້າງໃຫ້ເປັນຈິງ" ແລະ "ພາບລັກທີ່ AEON ກຣຸບປາຖະໜາ" ເພື່ອເຮັດໃຫ້ອະນາຄົດດັ່ງກ່າວເປັນຈິງ "ພາບລັກ ແລະ ຄຳໝັ້ນສັນຍາທີ່ຈະເອົາໃຈໃສ່" ທີ່ມວນຊົນ AEON ແບ່ງປັນກັນ ດັ່ງ3 ຢ່າງນີ້

ວິໄສທັດທັງໝົດນີ້ເວົ້າໂດຍລວມໜຶ່ງຄຳສັບ ກໍຄື "ຄຳເວົ້າແຫ່ງວິໄສທັດ"



ຄຳເວົ້າແຫ່ງວິໄສທັດ

## ສ້າງສັນ
## ຊີວິດໃນອະນາຄົດທີ່
## ທຸກໆຄົນມີ
## ຮອຍຍິ້ມອັນເບີກບານ



### ອະນາຄົດທີ່ AEON ກຣຸບຢາກສ້າງໃຫ້ເປັນຈິງ

ໃຫ້ລູກຄ້າໄດ້ສຳຜັດເຖິງ "ສັງຄົມທີ່ສົດໃສ" ແລະ ຮູ້ສຶກເຖິງ "ຄວາມສຸກຂອງຕົນເອງ" ເພື່ອໃຫ້ອະນາຄົດມີ "ຄວາມອຸດົມຮັ່ງມີ ແລະ ເຕັມປ່ຽມໄປດ້ວຍຮອຍຍິ້ມ"

### ພາບລັກທີ່ AEON ກຣຸບປາຖະໜາ

ເປັນກຸມທີ່ນຳໜ້າໃນການຮ່ວມສ້າງວິຖີຊີວິດ
ທັງບຸກຄົນ ແລະ ທັງສັງຄົມ
ເພື່ອສ້າງຄວາມອຸດົມຮັ່ງມີຍິ່ງໆຂຶ້ນ

### ພາບລັກ ແລະ ຄຳໝັ້ນສັນຍາທີ່ຈະເອົາໃຈໃສ່

~ພາບລັກ 3 ຢ່າງ~
"ປະຕິບັດດ້ວຍຄວາມສະໝັກໃຈ, ບົນພື້ນຖານຄວາມຄິດ" "ຮຽນຮູ້ແບບບໍ່ຢຸດຢັ້ງ, ເສີມສ້າງຄຸນຄ່າຂຶ້ນມາໃໝ່" "ສ້າງຄວາມສຳພັນ, ບຳລຸງຮັກສາ, ແລະ ແບ່ງປັນ"
~ຄຳໝັ້ນສັນຍາ 1 ຂໍ້~
"ຊື່ສັດ ແລະ ຈິງໃຈ ຢ່າງບໍ່"

## ໃຫ້ລູກຄ້າໄດ້ສຳຜັດເຖິງ "ສັງຄົມທີ່ສົດໃສ" ແລະ ຮູ້ສຶກເຖິງ "ຄວາມສຸກຂອງຕົນເອງ" ເພື່ອໃຫ້ອະນາຄົດມີ "ຄວາມອຸດົມຮັ່ງມີ ແລະ ເຕັມປ່ຽມໄປດ້ວຍຮອຍຍິ້ມ"

ເມື່ອຄວາມໄວຂອງການປ່ຽນແປງເພີ່ມຂຶ້ນ ແລະ ປະກົດການຕ່າງໆມາເຊື່ອມໂຍງກັນ ການຄາດເດົາອະນາຄົດຈະກາຍເປັນເລື່ອງທີ່ຍາກຂຶ້ນ ດ້ານໜຶ່ງມີການພົບປະທີ່ປະຫຼາດໃຈ ຫຼື ການຄົ້ນພົບສິ່ງທີ່ດີ, ແຕ່ອີກດ້ານໜຶ່ງອາດຈະມີຄວາມທ້າທາຍທີ່ຊັບຊ້ອນ ແລະ ເລິກເຊິ່ງເພີ່ມຂຶ້ນກໍເປັນໄດ້

ຄວາມກ້າວໜ້າຂອງເຕັກໂນໂລຢີ ເສີມຂະຫຍາຍຄວາມສາມາດຂອງມະນຸດ ລູກຄ້າຈະສະແຫວງຫາສິ່ງທີ່ມີຄວາມເປັນຂອງຕົນເອງ, ຄວາມເຫັນດີ, ຄວາມເຊື່ອໝັ້ນ ແລະ ອື່ນໆ ທີ່ໄດ້ຮັບຄວາມອຸດົມສົມບູນຈາກດ້ານໃນຂອງຈິດໃຈ

ພວກເຮົາໄດ້ຈິນຕະນາການຮູບພາບຂອງ "ອະນາຄົດທີ່ AEON ກຣຸບຢາກສ້າງໃຫ້ເປັນຈິງ" ຈາກມຸມມອງຂອງລູກຄ້າ

### ອະນາຄົດທີໃຫ້ລູກຄ້າໄດ້ສຳຜັດເຖິງ "ສັງຄົມທີ່ສົດໃສ"

ຄວາມສະດວກ, ຄວາມສະບາຍ, ປະສົບການຕື່ນເຕັ້ນໃນຊີວິດເພີ່ມຂຶ້ນ ຄວາມກັງວົນດ້ານລົບເຊັ່ນ ຄວາມເລື່ອມລ້ຳ ແລະ ບັນຫາທາງສິ່ງແວດລ້ອມແມ່ນ ຈະເລີ່ມຫາຍໄປ ພວກເຮົາຢາກນຳເອົາສິ່ງເຫຼົ່ານີ້ມາສ້າງ ອະນາຄົດທີ່ສາມາດສຳຜັດໄດ້ເຖິງຄວາມສົດໃສຂອງສັງຄົມໃຫ້ເປັນຈິງ

### ອະນາຄົດທີ່ລູກຄ້າສາມາດສຳຜັດເຖິງ "ຄວາມສຸກຂອງຕົນເອງ"

ຮູ້ຄວາມສາມາດ ແລະ ການເຕີບໂຕຂອງຕົນເອງ. ສະແດງບຸກຄະລິກກະພາບ ແລະ ພະລັງດຶງດູດຂອງຕົນອອກມາໄດ້. ມີສະຖານທີ່ທີ່ເປັນໂຕຂອງຕົນເອງໄດ້, ມີຄົນທີ່ເຫັນດີນຳ ແລະ ໄວ້ວາງໃຈກັນ. ຢາກໃຫ້ທຸກໆຄົນໄດ້ສຳຜັດຄວາມສຸກທີ່ເປັນໂຕຂອງຕົນເອງ ຜ່ານສິ່ງເຫຼົ່ານັ້ນໃນອະນາຄົດ

### ອະນາຄົດທີ່ລູກຄ້າມີ "ຄວາມອຸດົມຮັ່ງມີ ແລະ ເຕັມປ່ຽມໄປດ້ວຍຮອຍຍິ້ມ"

ໃນບາງຄັ້ງ, ຄວາມຈະເລີນພັດທະນາຂອງສັງຄົມ ແລະ ຄວາມສຸກຂອງທຸກໆຄົນ, ອາດກົງກັນຂ້າມກັນ. ໂດຍການດຸ່ນດ່ຽງທັງສອງນັ້ນ ເຮັດໃຫ້ລູກຄ້າດຳລົງຊີວິດຢ່າງອຸດົມສົມບູນພ້ອມດ້ວຍຮອຍຍິ້ມ. ໃນອະນາຄົດ, ຢາກໃຫ້ຮອຍຍິ້ມນັ້ນ ກວ້າງຂວາງທົ່ວເຖິງສຸດຂອບສາຍຕາ

## ເປັນກຸ່ມທີ່ນຳໜ້າໃນການຮ່ວມສ້າງວິຖີຊີວິດ ທັງບຸກຄົນ ແລະ ທັງສັງຄົມ ເພື່ອສ້າງຄວາມອຸດົມສົມບູນຍິ່ງໆຂຶ້ນ

ພວກເຮົາຢາກໃຫ້ທັງລູກຄ້າ ແລະ ໝູ່ເພື່ອນທີ່ເຫັນດີກັບວິໄສທັດຂອງເຮົາ ມາຮ່ວມມືກັນເປັນກຸ່ມເພື່ອສ້າງອະນາຄົດ ທີ່ມີຮອຍຍິ້ມທີ່ເບີກບານນຳກັນ

ໂດຍນຳເອົາການປະດິດສ້າງຂອງຕົນ ແລະ ການຮ່ວມສ້າງວິຖີຊີວິດ ເປັນກຸ່ມທີ່ເຮັດໃຫ້ທຸກໆຄົນ ແລະ ສັງຄົມອຸດົມສົມບູນ ພ້ອມການເຕີບໂຕ ແລະ ພັດທະນາ

ພັດທະນາຜະລິດຕະພັນ ແລະ ການບໍລິການ ກ້ຽວພັນໄປເຖິງ "ຄວາມສຳພັນ" ທີ່ເປັນຄີເວີດທີ່ຈະນຳມາເປັນບົດບາດຕໍ່ໄປນີ້ ເພື່ອສ້າງສະໜອງຄຸນຄ່າທີ່ບໍ່ເຄີຍມີມາກ່ອນ



ສ້າງຄວາມສຳພັນ ກັບຄົນຄົນໜຶ່ງຢ່າງເລິກເຊິ່ງ

ສ້າງຄວາມສຳພັນ ລະຫວ່າງຄົນ ແລະ ສັງຄົມ

"ຄວາມສຳພັນ"

ສ້າງຄວາມສຳພັນລະຫວ່າງຄົນ ແລະ ຄົນ

ຂະຫຍາຍຄວາມສຳພັນ

ໃນການປະຕິບັດ 4 ພາລະບົດບາດ ພ້ອມທັງຕອບສະໜອງຄຸນຄ່າໃໝ່ ຄວາມທ້າທາຍຂອງເຮົາມີຢູ່ຈຸດນີ້

## ສ້າງຄວາມສຳພັນກັບຄົນຄົນໜຶ່ງຢ່າງເລິກເຊິ່ງ

ມີການພົວພັນກ່ອນ-ຫຼັງຕອບສະໜອງຜະລິດຕະພັນ ແລະ ການບໍລິການ ເພື່ອເຮັດໃຫ້ຄວາມຜູກພັ້ນເນັ້ນໜາ ຈັບທັດສະນະລວມກ່ຽວກັບຊີວິດຂອງທຸກຄົນ, ເຂົ້າໃຈຈິດໃຈ ແລະ ຄວາມຮູ້ສຶກຂອງລູກຄ້າ ໃຫ້ລູກຄ້າໄດ້ຮູ້ຄວາມສາມາດຂອງຕົນ, ໄດ້ສະແດງບຸກຄະລິກກະພາບຂອງຕົນເອງອອກມາ ເພື່ອໄດ້ມີຄວາມສຸກໃນການດຳລົງຊີວິດແຕ່ລະວັນຂອງຕົນ, ຈະຕອບສະໜອງຄຸນຄ່າທີ່ຢາກໄດ້ຈາກຈິດໃຈ

## ສ້າງຄວາມສຳພັນ ລະຫວ່າງຄົນ ແລະ ສັງຄົມ

ຜ່ານການພົວພັນ ແລະ ການຊ່ວຍເຫຼືອຄົນອື່ນ, ພວກເຮົາຈະຕອບສະໜອງໂອກາດ ແລະ ວິທີໃຫ້ແກ່ລູກຄ້າໄດ້ສ້າງສັນຄວາມອຸດົມສົມບູນຂອງຈິດໃຈໂດຍເອົາຄົນຄົນໜຶ່ງມີຄວາມສຳພັນກັບສັງຄົມ. ເພື່ອໃຫ້ໄດ້ເອົາບຸກຄະລິກກະພາບແລະຄວາມສາມາດຂອງຕົນນຳມາສະແດງອອກໃນໂອກາດທີ່ໄດ້ສຳຜັດຄວາມສຸກກັບສັງຄົມ

ຂະຫຍາຍຄວາມສຳພັນ

## ສ້າງຄວາມສຳພັນລະຫວ່າງຄົນ ແລະ ຄົນ

ພວກເຮົາຈະເຊື່ອມຕໍ່ລູກຄ້າເຊິ່ງກັນ ແລະ ກັນໂດຍອີງໃສ່ຄຸນຄ່າຊີວິດ ແລະ ຄວາມມັກຂອງແຕ່ລະຄົນ. ນຳພາຂ້າມຜ່ານໄວອາຍຸ, ໄລຍະທາງ ແລະ ສິ່ງກີດຂວາງໃຫ້ມາກ່ຽວຂ້ອງກັນ, ຈະຕອບສະໜອງໂອກາດ, ເວລາ ແລະ ສະຖານທີ່ເພື່ອໃຫ້ໄດ້ແບ່ງປັນຄວາມດີໃຈ-ຄວາມມ່ວນຊື່ນນຳຜູ້ທີ່ທ່ານເຫັນດີ ແລະ ເຊື່ອໝັ້ນ

## ຂະຫຍາຍຄວາມສຳພັນ

ນຳເອົາຄວາມຜູກພັ້ນທີ່ຢູ່ "ອ້ອມຂ້າງ" ລູກຄ້າໄປສູ່ "ທ້ອງຖິ່ນ" ເຖິງ "ທົ່ວໂລກ", ໃຫ້ໄດ້ຄິດເຖິງຄວາມອຸດົມສົມບູນຂອງສັງຄົມໂດຍລວມຈາກຊີວິດປະຈຳວັນ. ນອກນັ້ນ, ຈະໄດ້ສ້າງສັນໃຫ້ສັງຄົມສົດໃສເຕັມໄປດ້ວຍຄວາມດີໃຈ ໄປດ້ວຍກັນກັບລູກຄ້າ

## ພາບລັກ ແລະ ຄຳໝັ້ນສັນຍາທີ່ຈະເອົາໃຈໃສ່

ເພື່ອເປັນກຸ່ມບໍລິສັດທີ່ສືບຕໍ່ປະດິດສ້າງ
ແລະ ໃຫ້ວິໄສທັດມີຄວາມເປັນຈິງ.
ພວກເຮົາຈະແບ່ງປັນ 3 ພາບຫຼັກ ແລະ 1 ຄຳໝັ້ນສັນຍາ
ເພື່ອສ້າງສັນອະນາຄົດທີ່ໄດ້ດຳລົງຊີວິດຢ່າງມີຮອຍຍິ້ມອັນເບີກບານ

## ພາບລັກ 3 ຢ່າງ

"ປະຕິບັດດ້ວຍຄວາມສະໝັກໃຈ, ບົນພື້ນຖານຄວາມຄິດ"

ເອົາລູກຄ້າເປັນຈຸດກາງ ແລະ ທຸກຄົນມີຄວາມຄິດຂອງຕົນ, ສະແດງອອກ ແລະ ລົງມືປະຕິບັດ. ຈະນຳເອົາທັນຄົ້ນແຫ່ງການສົນທະນາ ແລະ ການຮ່ວມມືທີ່ເກີດຂຶ້ນຈາກການກະທຳແບບສະໝັກໃຈໃຫ້ກາຍເປັນພະລັງຂອງນະວັດຕະກຳ

"ຮຽນຮູ້ແບບບໍ່ຢຸດຢັ້ງ, ເສີມສ້າງຄຸນຄ່າຂຶ້ນມາໃໝ່"

ການສືບຕໍ່ການຮຽນຮູ້, ເຮັດໃຫ້ຂະຫຍາຍຄວາມເປັນໄປໄດ້ຂອງການປະຕິບັດ. ພວກເຮົາຈະສ້າງມູນຄ່າໃຫມ່ໂດຍການຄົ້ນພົບປັນຍາຈາກການປະຕິບັດ ແລະ ການຂັດເອົາຄວາມຊຳນານຂອງພວກເຮົາເອງ

"ສ້າງຄວາມສຳພັນ, ບຳລຸງຮັກສາ, ແລະ ແບ່ງປັນ"

ສ້າງສັນ ແລະ ບຳລຸງລ້ຽງການເຊື່ອມຕໍ່ທີ່ຫຼາກຫຼາຍຊະນິດໂດຍບໍ່ກຳນົດຂອບເຂດບໍລິສັດ, ກຸ່ມ ແລະ ອົງການຈັດຕັ້ງ. ເລັ່ງວົງຈອນຂອງການຮຽນຮູ້ເຊິ່ງກັນແລະກັນ ແລະ ການສ້າງມູນຄ່າໂດຍຜ່ານການສ້າງຄວາມສຳພັນ ເພື່ອສ້າງສັນອະນາຄົດຂອງການດຳລົງຊີວິດດ້ວຍກັນ

## ຄຳໝັ້ນສັນຍາ 1 ຂໍ້

"ຊື່ສັດ ແລະ ຈິງໃຈ ຢ່າງບໍ່ຢຸດຢັ້ງ"

ຍ້ອນມີຄວາມຈິງໃຈ ແລະ ຄວາມຊື່ສັດເຮັດໃຫ້ຄົນໄວ້ວາງໃຈໃນການກະທຳ ແລະ ພາໃຫ້ເກີດການເຫັນອົກເຫັນໃຈກັນ ຄວາມເຫັນອົກເຫັນໃຈຈາກລູກຄ້າ ແລະ ສະຫາຍ ເປັນຈຸດເລີ່ມຕົ້ນຂອງການຮ່ວມສ້າງກັນ ພວກເຮົາສາບານວ່າຈະສືບຕໍ່ການມີຄວາມຈິງໃຈແລະຊື່ສັດຕະຫຼອດໄປ



ຈິນຕະນາການ ແລະ ມາສ້າງສັນ

ທິວທັດເຕັມປ່ຽມໄປດ້ວຍຮອຍຍິ້ມທີ່ຫຼາກຫຼາຍສີສັນ